ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company

ຖະໜົນກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປລາວ, ໂທ: 021-264834-5, ແຟັກ: 021-264836
Khamphengmueng Rd, Phonthan Village, Saysettha District, Vientiane Capital, Lao P.D.R, Tel: 021-264834-5, Fax: 021 -264836

ເລກທີ:0102./PTL/2018
ວັນທີ: 27 ເມສາ 2018

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ການແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄ້ອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/ຕລຊລ, ລົງວັນທີ 07 ມັງກອງ 2011.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເມື່ອວັນທີ 27 ເມສາ 2018 ເວລາ 09:30 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 41 ທ່ານ, ຖືຮຸ້ນລວມ 198,805,477 ຮຸ້ນ, ຄິດເປັນ 84.60% ຂອງຈຳນວນຮຸ້ນທັງໝົດທີ່ຈຳໜ່າຍແລ້ວຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາວາລະຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,804,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,804,477 ສຽງ ຄິດເປັນ 100 %.

2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,804,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,804,477 ສຽງ ຄິດເປັນ 100 %.

3. ພິຈາລະນາ ແລະ ຮັບຮອງ ຜົນການປະຕິບັດງານ ປີ 2017 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດ ປະຈຳປີ 2018

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,804,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,804,477 ສຽງ ຄິດເປັນ 100 %.

4. ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນ ປະຈຳປີ 2017

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

5. ພິຈາລະນາ ແລະ ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2017 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

6. ພິຈາລະນາ ແລະ ຮັບຮອງ ສືບຕໍ່ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2018

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

7. ພິຈາລະນາ ແລະ ຮັບຮອງ ການລາອອກຈາກຕຳແໜ່ງຂອງ ປະທານສະພາບໍລິຫານ, ຜູ້ອຳນວຍການໃຫຍ່.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

8. ພິຈາລະນາ ແລະ ຮັບຮອງ ການປັບປ່ຽນຕຳແໜ່ງ ແລະ ຈຳນວນສະມາຊິກສະພາບໍລິຫານ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

9. ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານໃນການຊອກຫາ ແລະ ຄັດເລືອກເອົາບຸກຄົນທີ່ມີຄວາມຮູ້ຄວາມສາມາດບໍ່ວ່າຈະມາຈາກພາຍໃນ ຫຼື ຕ່າງປະເທດ ມາຮັບຕຳແໜ່ງຜູ້ອຳນວຍການໃຫຍ່ ຂອງບໍລິສັດທີ່ຫວ່າງລົງ.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

10. ຮັບຊາບກ່ຽວກັບການປັບປຸງໂຄງສ້າງໃໝ່ຂອງບໍລິສັດ, ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍຂອງລັດ ເນື່ອງຈາກອາລະນີຕິດພັນກັບດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ /331ນຍ, ລົງວັນທີ 27 ຕຸລາ 2017 ສະນັ້ນຈຶ່ງບໍ່ມີການລົງຄະແນນ ພຽງແຕ່ເປັນການແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ

11. ພິຈາລະນາ ແລະ ຮັບຮອງ ການໃຫ້ສິດແກ່ສະພາບໍລິຫານ ໃນການພິຈາລະນາແບ່ງເງິນປັນຜົນພິເສດ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,805,477 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,805,477 ສຽງ ຄິດເປັນ 100 %.

ໃນກອງປະຊຸມສາມັນຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາເພີ່ມເຕີມ, ປະທານສະພາບໍລິຫານ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 11:20 ໂມງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານບັນດາທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານສະພາບໍລິຫານ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ